**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 6 ເມສາ 2008 ( 04-06-2008 )**

---

## ຄົ້ນຫາທິດທາງໃໝ່:

**ຂໍ້ພຣະຄັມພີໃນບົດຮຽນ:** (ປະຖົມມະການ 12:1-8; 13:5-9, 14-16)

**ຄຳຖາມແຫ່ງຊີວິດ:** ຂ້າພະເຈົ້າຈະຕອບສນອງພຣະເຈົ້າຢ່າງໃດ ເມື່ອພຣະອົງໄດ້ຊົງນຳພາໃຫ້ປ່ຽນທິດທາງທີ່ບໍ່ໄດ້ຄິດໄວ້ໃນຊີວິດມາກ່ອນ?

**ພຣະຄັມພີແຫ່ງຄວາມຈິງ:** ສິ່ງທີ່ພຣະເຈົ້າສັນຍາ ແລະການເອີ້ນຂອງພຣະອົງຫລາຍ ໆ ເທື່ອທີ່ບໍ່ເຫັນແຈ່ມແຈ້ງດີໃນທັນທີ ຫລືບໍ່ໃຫ້ມີຄວາມຂັດແຍ້ງອັນໃດ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍທ່ານໃຫ້ຄົ້ນຫາທິດທາງໃໝ່ໃນຄວາມເຊື່ອດ້ວຍສິ່ງຕໍ່ໄປນີ້ໂດຍ:

- ບອກເຖິງການທ້າທາຍຂອງຄວາມເຊື່ອທີ່ອັບຣາມ ມີ ແລະ
- ໃຫ້ທວນຄິດເຖິງຄວາມຍິນດີທີ່ທ່ານໄດ້ຍົກຍ້າຍໄປຕາມທິດທາງຂອງພຣະເຈົ້ານຳພາ.

**ການຈັດຕຽມຂອງຄຣູ**

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

**ແຜນການສອນ**

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**ແນະນຳ:** ໃຫ້ນັກຮຽນທວນຄິດເຖິງທາງທີ່ຖືກກັບການຕອບສນອງທີ່ເຂົາເຈົ້າບໍ່ໄດ້ຄິດວ່າຈະມີການປ່ຽນແປງໃນການດຳຣົງຊີວິດຂອງເຂົາເຈົ້າມາກ່ອນ.

- ຄຳຖາມແຫ່ງຊີວິດໃນອາທິດນີ້ " ຖ້າພຣະເຈົ້ານຳພາຂ້າພະເຈົ້າໃຫ້ເຮັດບາງຢ່າງປ່ຽນແປງໃນຊີວິດຂອງຂ້າພະເຈົ້າ ແລ້ວຂ້າພະເຈົ້າຈະຕອບສນອງຢ່າງໃດ? ບອກນັກຮຽນວ່າ ບົດຮຽນໃນມື້ນີ້ຈະຊ່ອຍໃຫ້ເຂົາເຈົ້າມີຈິດໃຈພ້ອມທີ່ຈະຕອບສນອງການນຳພາຂອງພຣະເຈົ້າໃຫ້ເດີນຕາມທິດທາງໃໝ່..

1. <u>ຮຽກເອີ້ນໃຫ້ປ່ຽນແປງ:</u> (ປະຖົມມະການ 12:1-3)

- ຂໍໃຫ້ນັກຮຽນອາສາສມັກອ່ານ ປະຖົມມະການ 12:1-3
  - ໃຫ້ນັກຮຽນຊອກຢູ່ໃນຂໍ້ທີ 1 ວ່າແມ່ນຫຍັງທີ່ພຣະເຈົ້າໄດ້ຊົງບອກອັບຣາມໃຫ້ອອກຈາກ (ປະໄວ້) ແລ້ວຂຽນຄຳຕອບໃສ່ກະດານ. ຖາມນັກຮຽນວ່າ: ເປັນຫຍັງຈຶ່ງຕ້ອງປະສິ່ງເຫລົ່ານີ້ ເຊັ່ນ: ທີ່ດິນ, ຍາດພີ່ນ້ອງ, ພໍ່ແມ່ ເຮືອນຊານບ້ານຊ່ອງ) ຄວນຈະເປັນການຍາກສຳລັບອັບຣາມທີ່ຈະຮັບໄດ້: ແມ່ນຫຍັງທີ່ບັນດາຜູ້ທີ່ເຊື່ອໃນສມັຍນີ້ໄດ້ປະເຊີນກັບການໃຫ້ອອກຈາກຄອບຄົວໄປຮັບໃຊ້ພຣະເຈົ້າ?
  - ນຳພານັກຮຽນຊອກໃນຂໍ້ທີ 2-3 ສຳລັບເຫດຜົນທີ່ອັບຣາມໄດ້ຕອບສນອງຕໍ່ການຮຽກເອີ້ນຂອງພຣະເຈົ້າ: ຖາມວ່າ: ຖ້າຫາກທ່ານຢູ່ໃນຖານະອັບຣາມ, ພຣະຄຳຂອງພຣະເຈົ້າທີ່ຕັດກັບອັບຣາມນັ້ນເປັນການສະດວກສະບາຍບໍ່? ໜ້າສົນໃຈດີບໍ່? ຫລື ເປັນການທຳໃຫ້ຕົກໃຈ?
  - ຂໍໃຫ້ນັກຮຽນອາສາສມັກແບ່ງປັນໃນເຣື່ອງທີ່ລາວໄດ້ຮັບການອວຍພອນຈາກພຣະເຈົ້າດ້ວນການຕິດຕາມ
  - ພຣະເຈົ້າດ້ວຍຄວາມເຊື່ອໃນພຣະອົງ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ປະຖົມມະການ 12:1-3)
1. ສົມມຸດວ່າທ່ານເປັນອັບຣາມ. ແມ່ນຫຍັງທີ່ໃຫ້ທ່ານຍອມຮັບ ແລະທຳຕາມທີ່ພຣະເຈົ້າຊົງຮຽກເອີ້ນ?
2. ມີທາງໃດທີ່ສ້າງຄວາມຫຍຸ້ງຍາກໃຫ້ວັທນະທັມ ຫລືຄອບຄົວຂອງພວກເຮົາຕອບສນອງແບບດຽວກັນກັບອັບຣາມໄດ້ຮັບການຮຽກເອີ້ນຈາກພຣະເຈົ້າ?
3. ການທີ່ອັບຣາມໄດ້ເຊື່ອໄວ້ວາງໃຈທີ່ພຣະເຈົ້າໄດ້ຊົງຮຽກເອີ້ນນັ້ນຍັງມີອິດທິພົນຕໍ່ບັນດາຜູ້ທີ່ເຊື່ອໃນສມັຍນີ້ຢູ່ບໍ່?

2. <u>ເຫັນແຈ້ງດີມາຈາກການເຊື່ອຟັງ:</u> (ປະຖົມມະການ 12:4-8)

- ຂໍໃຫ້ນັກຮຽນສອງຄົນອາສາສມັກອ່ານພຣະທັມ ປະຖົມມະການ 12:4-8
  - ຍົກເອົາທິດທາງໃນການ "ເຫັນແຈ້ງດີມາຈາກການເຊື່ອຟັງ" ທີ່ອັບຣາມໄດ້ຕອບສນອງຕາມຄຳຮຽກເອີ້ນຂອງພຣະເຈົ້າ, ຊີ້ງຊີ້ໃຫ້ນັກຮຽນເຫັນເຖິງການຊົງນຳຂອງພຣະເຈົ້າ.
  - ນຳພານັກຮຽນໄປເບິ່ງແຜນທີ່ **ການເດີນທາງຂອງອັບຣາມ** ໃນປຶ້ມພຣະຄັມພີ, ໃຫ້ເບິ່ງແຕ່ລະຈຸດທີ່ອັບຣາມໄດ້ຢຸດພັກຕາມບ່ອນຕ່າງ ໆ ໃນຂໍ້ທີ 4-8 ມີຊື່ຢ່າງໃດແດ່ ກັບໄປເບິ່ງຂໍ້ທີ 6-8 ແລ້ວອະທິບາຍວ່າ: ເປັນຫຍັງອັບຣາມຈຶ່ງສ້າງແທ່ນບູຊາຂຶ້ນທີ່ເຊເຄັມ ແລະເບັດເອນ (ສຳລັບນະມັສການພຣະເຈົ້າ)

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ປະຖົມມະການ 12:4-8)
1. ດ້ວຍເຫດຜົນອັນໃດທີ່ພາໃຫ້ອັບຣາມສະລະທຸກສິ່ງໃນຊີວິດ ແລະໄປຕາມຄຳແນະນຳຂອງພຣະເຈົ້າໄດ? ແມ່ນຫຍັງທີ່ທ່ານສາມາດປະຖິ້ມຂອງຝ່າຍໂລກ ແລະຕິດຕາມພຣະເຈົ້າໄປ?
2. ພຣະພອນອັນໃດທີ່ອັບຣາມໄດ້ຮັບຈາກຄຳສັນຍາຂອງພຣະເຈົ້າ? ແມ່ນຫຍັງຈະເກີດຂຶ້ນຖ້າອັບຣາມປະຕິດເສດການຮຽກເອີ້ນຂອງພຣະເຈົ້າ? ທ່ານຈະຂາດພຣະພອນອັນໃດຖ້າຫາກທ່ານປະຕິເສດ ບໍ່ຕອບສນອງຄຳຮຽກເອີ້ນຂອງພຣະເຈົ້າ?
3. ທ່ານຈະສ້າງສັນຍາລັກເພື່ອເປັນການຈົດຈຳການຊົງນຳແລະການຊົງປະທານຂອງພຣະເຈົ້າທີ່ໃຫ້ແກ່ທ່ານຢ່າງໃດ?
4. ການສ້າງແທ່ນບູຊາແຕ່ລະບ່ອນ ເປັນຫຍັງຈຶ່ງເປັນຄວາມສຳຄັນສຳລັບອັບຣາມ? ເປັນຫຍັງອັບຣາມຈຶ່ງບໍ່ຖ້າໃຫ້ເຖິງຕອນຮອດເປົ້າໝາຍປາຍທາງສຸດທ້າຍກ່ອນຈຶ່ງສ້າງ? ການຂອບພຣະຄຸນ ແລະການສັຣເສີນພຣະເຈົ້າຂອງທ່ານຈຶ່ງທຳແລ້ວທຳອີກ ແລະທຳໄປເລື້ອຍ ໆ ຕລອດຊີວິດຂອງທ່ານຈຶ່ງຖືວ່າເປັນຄວາມສຳຄັນສຳລັບທ່ານ?

3. <u>ບັນຫາຂັດແຍ່ງເກີດຂຶ້ນ</u> (ປະຖົມມະການ 13:5-7)

- ຂໍໃຫ້ນັກຮຽນອາສາສມັກອ່ານ ປະຖົມມະການ 13:5-7
- ໃຫ້ນັກຮຽນບອກຊື່ທີ່ຢູ່ທີ່ເຂົາເຈົ້າໄດ້ແບ່ງປັນ (ເວົ້າ) ໃຫ້ຄົນໃນຄອບຄົວ, ເພື່ອນຝູງ, ຄົນອັນຕະພານຟັງ. ໃຫ້ສະແດງຜົນໄດ້ ຜົນເສັຽ ແລະບັນຫາໃນການແບ່ງປັນໃຫ້ແກ່ຄົນອື່ນ ໆ ຕາມບ່ອນຕ່າງ ໆ. ອະທິບາຍບັນຫາໃນການແບ່ງປັນສະຖານທີ່ ທີ່ອັບຣາມ ແລະ ໂລດໄດ້ພົບ.
- ທິດທາງໃດທີ່ເປັນຂອງອັບຣາມ ທິດທາງໃດເປັນຂອງໂລດທີ່ເຂົາເຈົ້າເລືອກເອົາເປັນທີ່ຢູ່ອາສັຍທຳມາຫາກິນ? ແລະທິດທາງ (ບ່ອນ) ໃດທີ່ສ້າງບັນຫາໃຫ້ເຂົາເຈົ້າ?

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> ປະຖົມມະການ 13:5-7

1. ວັດຖຸສິ່ງໃດທີ່ພຣະເຈົ້າບໍ່ໄດ້ອວຍພອນໃຫ້ແກ່ອັບຣາມ? ວັດຖຸສິ່ງໃດທີ່ພຣະເຈົ້າບໍ່ໄດ້ຊົງອວຍພອນໃຫ້ທ່ານ?
2. ສິ່ງທີ່ພຣະເຈົ້າບໍ່ຊົງອວຍພອນໃຫ້ນັ້ນເປັນຫຍັງຈຶ່ງມັກມີບັນຫາ?
3. ໃຜເປັນຜູ້ມີພລັງອຳນາດເໜືອບັນຫາທຸກສິ່ງຢ່າງ, ໃນຄອບຄົວ ແລະ ໃນໂບດ?

4. <u>ເພິ່ງໃນຄຳສັນຍາຂອງພຣະເຈົ້າ:</u> (ປະຖົມມະການ 13:8-9, 14-16)

- ຂໍໃຫ້ນັກຮຽນອາສາສມັກອ່ານ ປະຖົມມະການ 13:8-9, 14-16
- ອັບຣາມໄດ້ຕັ້ງສາມບັນຫາໃຫ້ກັບໂລດ. ໄປເບິ່ງໃນຂໍ້ທີ 8-9 ທີ່ສາມຢ່າງທີ່ຈະຕ້ອງທຳ, ຂຽນຄຳຕອບໃສ່ກະດານ (ຄຳປຶກສາເພື່ອຫລີກເວັ້ນການຜິດຖຽງກັນ, ທີ່ໃຫ້ໂລດເປັນຜູ້ເລືອກກ່ອນ. ອັບຣາມມີຄວາມເຊື່ອໄວ້ວາງໃຈວ່າພຣະເຈົ້າຈະຊົງເປັນຜູ້ຈັດຕຽມໄວ້ສຳລັບລາວເອງ ແລະໂລດຫລານຊາຍຂອງຕົນ.
- ໃນທາງໃດທີ່ອັບຣາມໄດ້ເລືອກເສັ້ນທາງດ້ວຍສະຕິປັນຍາໃນການແກ້ປັນຫາຂອງການແຍກທາງກັນກັບໂລດ? ອັບຣາມໄດ້ແກ້ບັນຫາດ້ວຍວິທີໃດ?
- ສົນທະນາເຣື່ອງສິດທິພິເສດທີ່ອັບຣາມນຳມາສະແດງຜ່ານການແກ້ໄຂບັນຫາຂອງລາວກັບໂລດ. ນຳພານັກຮຽນໃຫ້ເຫດຜົນທີ່ສຳຄັນໃນການແກ້ບັນຫາໃນຄອບຄົວຂອງພວກເຮົາໃນສມັຍນີ້ເຊັ່ນດຽວກັນ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> ( ປະຖົມມະການ 13:8-9, 14-16)

1. ແມ່ນຫຍັງທີ່ພຣະເຈົ້າໄດ້ຊົງໃຫ້ຄຳເຫັນແກ່ອັບຣາມໃນຂໍ້ທີ 14? ເປັນຫຍັງຈຶ່ງເປັນການສຳຄັນເພື່ອໃຫ້ພວກເຮົາເກັບຮັກສາໄວ້ເພື່ອແກ້ໄຂບັນຫາທຸກຢ່າງໃນຂ້າງໜ້າໃນການທຳໜ້າທີ່ເປັນຜູ້ແກ້ໄຂບັນຫາ?
2. ຜົນສຸດທ້າຍແມ່ນໃຜເປັນຜູ້ຄວບຄຸມນຳພາໃນການເດີນທາງຂອງອັບຣາມ?
3. ອັບຣາມເປັນແບບຢ່າງສອນພວກເຮົາເຣື່ອການແກ້ໄຂບັນຫາຕາການແນະນຳຂອງພຣະເຈົ້າຢ່າງໃດ?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ</u>

- ພຣະເຈົ້າຊົງເອົາເຮົາອອກຈາກຄວາມສະດວກຂອງພວກເຮົາ ແລະຊົງຮຽກເອີ້ນໃຫ້ພວກເຮົາປ່ຽນແປງ.
- ແຜນການຂອງພຣະເຈົ້າໃຫ້ເຫັນແຈ່ມແຈ້ງໃນເມື່ອພວກເຮົາເຊື່ອໄວ້ວາງໃຈພຣະອົງເປັນຂັ້ນຕອນໄປຕາມລະຍະເວລາ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org. by JH